# ກຳລັງຟື້ນຟູຈາກໄພພິບັດບໍ?

## ໄປຫາທີ່ປຶກສາດ້ານທີ່ຢູ່ອາໄສຂອງ HUD ເພື່ອຂໍຄວາມຊ່ວຍເຫຼືອ ເຮັດໃຫ້ເຮືອນຂອງທ່ານເກີດຂຶ້ນອີກຄັ້ງ.

---

### ທີ່ປຶກສາດ້ານທີ່ຢູ່ອາໄສຈະ:

- ພົບກັບທ່ານແບບຊ້ອງໜ້າ ຫຼື ຜ່ານທາງໂທລະສັບ
- ປະເມີນບ່ອນຢູ່ອາໄສ, ບັນຫາດ້ານການເງິນ ແລະ ບັນຫາອື່ນຂອງທ່ານທີ່ເກີດຈາກໄພພິບັດ
- ປຶກສາຫາລືແຫຼ່ງຄວາມຊ່ວຍເຫຼືອທີ່ດີທີ່ສຸດກັບທ່ານ
- ເຊື່ອມຕໍ່ທ່ານກັບແຫຼ່ງຄວາມຊ່ວຍເຫຼືອໃນທ້ອງຖິ່ນທີ່ອາດຈະໃຫ້ການຊ່ວຍເຫຼືອເພີ່ມເຕີມ
- ຊ່ວຍຕິດຕໍ່ສື່ສານກັບຜູ້ໃຫ້ຢືມ, ບໍລິສັດປະກັນໄພຂອງທ່ານ ແລະ ໜ່ວຍງານລັດຖະບານ
- ຊ່ວຍໃນເລື່ອງເອກະສານທີ່ຈຳເປັນ
- ແນະນຳເຄື່ອງມືດ້ານການເງິນ ແລ ເຄື່ອງມືອື່ນເພື່ອຊ່ວຍທ່ານແກ້ໄຂບັນຫາໃນປັດຈຸບັນ ແລະ ຫຼີກລ່ຽງບັນຫາໃນອະນາຄົດ
- ຢູ່ກັບທ່ານໃນຕະຫຼອດຂະບວນການຟື້ນຟູ

---

**ພວກເຮົາຢູ່ທີ່ນີ້ເພື່ອຊ່ວຍທ່ານ**

**ອອນລາຍ**
- www.hud.gov/findacounselor
- www.consumerfinance.gov/find-a-housing-counselor

**ທາງໂທລະສັບ**
- ໂທຫາ Locator Service ຂອງ HUD ທີ່ເບີ (800) 569-4287

**ທາງແອັບສະມາດໂຟນ**
- HUD Counselor Locator

---

ທີ່ປຶກສາດ້ານທີ່ຢູ່ອາໄສເຮັດວຽກໃຫ້ອົງການບໍ່ຫວັງຜົນກຳໄລ ຫຼື ໜ່ວຍງານລັດຖະບານທີ່ເຂົ້າຮ່ວມໃນໂຄງການໃຫ້ຄຳປຶກສາດ້ານທີ່ຢູ່ອາໄສຂອງກະຊວງທີ່ຢູ່ອາໄສ ແລ ການພັດທະນາຕົວເມືອງ (HUD) ຂອງສະຫະລັດ. ທີ່ປຶກສາສາມາດຊ່ວຍທ່ານຊອກທາງເລືອກ ແລະ ແຫຼ່ງຄວາມຊ່ວຍເຫຼືອທີ່ດີສຸດສຳລັບສະພາບການຂອງທ່ານ. ການຊ່ວຍເຫຼືອສາມາດເປັນການຊ່ວຍເຫຼືອໄລຍະສັ້ນ ຫຼື ໄລຍະຍາວກໍໄດ້ໂດຍຂຶ້ນກັບຄວາມຕ້ອງການຂອງທ່ານ.